**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ກົມແຜນການ ແລະ ການເງິນ

ເລກທີ 11511 / ກຜງ

ນະຄອນຫຼວງວຽງຈັນ, ວັນທີ 12 ພຶດສະພາ 2023

## ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

ເຖິງ : ບໍລິສັດ ທີ່ສົນໃຈເຂົ້າຮ່ວມສົມທຽບລາຄາ

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ໄດ້ຮັບທຶນຈາກທະນາຄານໂລກ ເພື່ອໃຊ້ຈ່າຍສໍາລັບໂຄງການພັດທະນາຕາມແລວທາງເສດຖະກິດຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ (SEARECC) ແລະ ມີຈຸດປະສົງນໍາໃຊ້ສ່ວນໜຶ່ງຂອງທຶນເຂົ້າໃນລາຍຈ່າຍຂອງສັນຍາປັບປຸງ ແລະ ຂະຫຍາຍຫ້ອງເຮັດວຽກຂອງກອງເລຂາປະສານງານໂຄງການພັດທະນາຕາມແລວທາງເສດຖະກິດຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ, ດ້ວຍການປະມູນສົມທຽບລາຄາ.
2. ກະຊວງ ໂຍທາທິການ ແລະ ຂົນສົ່ງ ຂໍເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄວາມເໝາະສົມ ເຂົ້າຍື່ນຊອງປະມູນສົມທຽບລາຄາສໍາລັບ ປັບປຸງ ແລະ ຂະຫຍາຍຫ້ອງເຮັດວຽກຂອງກອງເລຂາປະສານງານໂຄງການພັດທະນາຕາມແລວທາງເສດຖະກິດຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ, ໄລຍະເວລາການສ້ອມແປງ 3 ເດືອນ ນັບແຕ່ມື້ເຊັນສັນຍາ.
3. ການປະມູນ ຈະດໍາເນີນຕາມຂັ້ນຕອນການປະມູນສົມທຽບລາຄາທີ່ໄດ້ກໍານົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄໍາແນະນໍາກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ບໍລິສັດທີ່ມີຄວາມສົນໃຈການປະມູນສົມທຽບລາຄາ ສາມາດຕິດຕໍ່ພົວພັນທີ່ ກົມແຜນການ ແລະ ການເງິນ, ກະຊວງໂຍທາທິການ ແລະ ຂົນສົ່ງ, ຖະໜົນລ້ານຊ້າງ, ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ.
   ເບີໂທ: +856-20 998-553-89; +856-20 569-569-95. Email: proc.dpf.mpwt@gmail.com
   CC: k_litta@yahoo.com; dilaphanhnana@yahoo.com; visara.khamvongsa@gmail.com
5. ຊອງປະມູນສົມທຽບລາຄາຕ້ອງສົ່ງກ່ອນ ເວລາ 14:00 ໂມງຂອງວັນທີ 25 ພຶດສະພາ 2023 ຢູ່ຫ້ອງປະຊຸມກົມແຜນການ ແລະ ການເງິນ, ກະຊວງໂຍທາທິການ ແລະ ຂົນສົ່ງ, ຖະໜົນລ້ານຊ້າງ, ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ. ໂດຍຊ້ອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບໍລິສັດທີ່ມີຄວາມສົນໃຈເຂົ້າຮ່ວມສົມທຽບລາຄາຄັ້ງນີ້.

ຫົວໜ້າກົມ

ຮອງຫົວໜ້າຄະນະກໍາມະການຈັດຊື້-ຈັດຈ້າງ

ກະຊວງໂຍທາທິການ ແລະ ຂົນສົ່ງ

ກົມແຜນການ ແລະ ການເງິນ

ວັນ ດີລະພັນ